ສຳນັກງານໃຫຍ່

ເລກທີ: 063 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 12 AUG 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ໃນນະຄອນຫຼວງວຽງຈັນ.

**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ server ຈຳນວນ 02 ເຄື່ອງ ແລະ ອຸປະກອນເນັດເວີກ ຈຳນວນ 02 ເຄື່ອງ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນເຄື່ອງ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

❖ **Server ຈຳນວນ 02 ເຄື່ອງ:**

| | |
|---|---|
| Chassis Size | 2 U |
| CPU | 4 Sockets<br>Intel Xeon Platinum 8268(2.9GHz/24-Core/35.75MB/205W)<br>Cascade lake Processor |
| RAM | 1 TB |
| Internal Storage<br>include RAID Card (Raid 6) | x4 SSD 480 GB, SATA |
| Network Card PCI 10 GE SFP+<br>include Transceiver Module | x2 PCIe 3.0 Cards, 2 Ports / PCI Card<br>(Total: 4 port ) |
| Network 10GE Cable 15 meters | 4 |
| FC HBA Card QLogic 16-32 Gbps<br>Auto-Negotiate<br>include Transceiver Module | x2 PCIe 3.0 Cards, 2 Ports / PCI Card<br>(Total: 4 port ) |
| FC Storage Cable OM3 or OM4 15 meters (Vendor Grade) | 4 |
| Power Supplies | 2 |
| Power Cord 1.5 meters | C13 - C14 |
| Compatibility OS | CentOS:7 & 8, Ubuntu: 18 & 20 |
| Hardware Warranty | 3 years |
| MA Support | 3 years<br>- Product should be register by BCEL name<br>- Local & Direct Support<br>- BCEL can open case online via: Web, Chat, Phone, Email<br>- Case(s) can be escalated based on severity level<br>- Support team member should have Knowledge Linux RedHat & Ubuntu |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

❖ Network Switch ຈຳນວນ 02 ເຄື່ອງ:

| Part Number | Description | Qty |
|---|---|---|
| **N9K-C93180YC-EX** | Nexus 9300 with 48p 10/25G SFP+ and 6p 100G QSFP28 | 1 |
| CON-SNT-93180YCX | SNTC-8X5XNBD Nexus 9300 with 48p | 1 |
| NXOS-9.3.3 | Nexus 9500, 9300, 3000 Base NX-OS Software Rel 9.3.3 | 1 |
| NXK-ACC-KIT-1RU | Nexus 3K/9K Fixed Accessory Kit, 1RU front and rear removal | 1 |
| NXA-PAC-650W-PI | Nexus NEBs AC 650W PSU - Port Side Intake | 2 |
| CAB-9K12A-NA | Power Cord, 125VAC 13A NEMA 5-15 Plug, North America | 2 |
| NXA-FAN-30CFM-B | Nexus Single Fan, 30CFM, port side intake airflow | 4 |
| QSFP-H40G-ACU10M | 40GBASE-CR4 Active Copper Cable, 10m | 4 |

**ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ <u>ເອກະສານຊອງທີ 1 (ບໍ່ປິດຊອງ).</u>

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ຕ້ອງມີວິຊາການສະເພາະ ແລະ ມີປະສົບການ ຢ່າງໜ້ອຍ 05 ປີຂຶ້ນໄປ (ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2019, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ).
2. ລະບຸຍີ່ຫໍ້, ປີຜະລິດສິນຄ້າ, ປະເທດທີ່ຜະລິດອຸປະກອນໄອທີ (SERIES) ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງອຸປະກອນໄອທີດັ່ງກ່າວໃຫ້ພາກສ່ວນອື່ນ.
3. ກຳນົດຍື່ນຊອງມາດຕະຖານເຕັກນິກດ້ານໄອທີ ຈະປິດຮັບວັນທີ **27/08/2020 ເວລາ 09:30** ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

❖ <u>ເອກະສານຊອງທີ 2 (ປິດຊອງ).</u>

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ໃນວັນທີ **03/09/2020 ເວລາ 09:30** ໂມງ ແມ່ນມື້ເປີດຊອງປະມູນແຈ້ງໃຫ້ ບໍລິສັດ, ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.
3. ບໍລິສັດຜູ້ສະໜອງຕ້ອງກຳນົດລຸ້ນ, Hardware & Software ຕ່າງໆ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ. ການຈັດຊື້ແມ່ນຈະເລືອກເອົາຍີ່ຫໍ້ໃດໜຶ່ງເທົ່ານັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 03/10/2020) ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ **<u>ໝາຍເຫດ:</u>** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈັດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- **ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

* ງວດທີ 1: ຊຳລະ 90% ຂອງມູນຄ່າ ພາຍຫຼັງໄດ້ຮັບເຄື່ອງ ແລະ ຕິດຕັ້ງສຳເລັດ.

* ງວດທີ 2: ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 06 ເດືອນ, ແຕ່ການຮັບປະກັນຄຸນນະພາບສິນຄ້າ ຕ້ອງແມ່ນຕາມໄລຍະເວລາຂອງສິນຄ້າດັ່ງກ່າວ ທີ່ຜູ້ສະໜອງແຈ້ງເບື້ອງຕົ້ນ, ຖ້າຫາກຜູ້ສະໜອງເມີນເສີຍ ບໍ່ເຂົ້າມາສ້ອມແປງບຳລຸງຮັກສາ ແມ່ນ ທຄຕລ ຈະປັບໄໝ 20% ຂອງມູນຄ່າ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ປະທານຄະນະກຳມະການປະມູນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ບັນທະລາດ ແກ້ວປະເສີດ